ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການຮ່ວມມືສາກົນ UNICEF ປະຈຳລາວ
ສະສະໜູນການພິມໂດຍ: ງົບປະມານແຫ່ງລັດ (ບ້ວງນ້ຳເທິນ 2)
ທະບຽນພິມເລກທີ: .................
ຂະໜາດພິມ: 21x29,7 cm, ຈຳນວນ:............ຫົວ
ພິມທີ່ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2012

ປຶດເຝິກຫັດ ໜ່ວຍບ້ານຂອງຂ້ອຍ ຊັ້ນອະນຸບານສຶກສາປີທີ 1
2012

ປຶດເຝິກຫັດ

# ໜ່ວຍບ້ານຂອງຂ້ອຍ

## ຊັ້ນອະນຸບານສຶກສາປີທີ 1



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2012

# ປຶດເຝິກຫັດ

# ເນື້ອໃນໜ່ວຍການສອນ

# ບ້ານຂອງຂ້ອຍ

## ສຳລັບເດັກ

## ອະນຸບານ ປີທີ 1


ຮຽບຮຽງໂດຍ: ແສງມະນີ ສຸພັນທະລົບ

ກວດແກ້ໂດຍ: ພວງຄຳ ສິມສະນິດ
ທອງແກ້ວ ອາສາ
ສົມບູນ ມາສຸວັນ
ເກດ ພັນຮັກ
ສີພາພອນ ມະນີວັນ
ວຽງແກ້ວ ພົມມະຈັກ
ມະນີວອນ ອາດຜາສຸກ
ພູມີ ພົມມະວົງ

ເອົ້າໜ້າໂດຍ: ຈັນທະໄລ ເກີດຫຼ້າ
ທອງດຳ ທອງສິນ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2012

# ຄຳນຳ

ການກຽມຄວາມພ້ອມຂັ້ນພື້ນຖານທາງດ້ານວິທະຍາສາດເປັນເລື່ອງທີ່ຈຳເປັນ ແລະ ມີຄວາມສຳຄັນຕໍ່ການຮຽນວິທະຍາສາດໃນຊັ້ນປະຖົມ. ການສ້າງຄວາມຮູ້ຄວາມເຂົ້າໃຈຂັ້ນພື້ນຖານທາງດ້ານຄວາມຮູ້ທົ່ວໄປກ່ຽວກັບວິທະຍາສາດໃຫ້ແກ່ເດັກດ້ວຍກິດຈະກຳທີ່ມີຄວາມມ່ວນຊື່ນກະຕຸ້ນໃຫ້ເດັກໄດ້ສັງເກດ, ທົດລອງ, ຄົ້ນຄິດມີເຫດຜົນໃນການແກ້ໄຂບັນຫາຈະຊ່ວຍໃຫ້ເດັກມັກ ແລະ ສົນໃຈຮຽນວິທະຍາສາດຫຼາຍຂຶ້ນ.

ປື້ມບົດເຝິກຫັດໜ່ວຍບ້ານຂອງຂ້ອຍເຫຼັ້ມນີ້ຮຽບຮຽງຂຶ້ນເພື່ອເຝິກແອບທັກສະການສັງເກດ ແລະ ແອບເວົ້າຄຳສັບທີ່ນຳໃຊ້ໃນຊີວິດປະຈຳວັນ ແລະ ວິທະຍາສາດທີ່ສອດຄ່ອງກັບມາດຖານສະມັດຖະພາບດ້ານ ການກຽມຄວາມພ້ອມທາງດ້ານວິທະຍາສາດສຳລັບເດັກອາຍຸ 3-4 ປີ.

ປື້ມບົດເຝິກຫັດເຫຼັ້ມນີ້ປະກອບດ້ວຍ 4 ຫົວຂໍ້ເນື້ອໃນທີ່ນຳມາເຝິກແອບເວົ້າຄຳສັບພື້ນຖານກ່ຽວກັບບ້ານທີ່ເດັກອາໄສຢູ່ມີດັ່ງນີ້:

1. ບ້ານທີ່ຂ້ອຍອາໄສ.
2. ອາຊີບ ແລະ ບຸກຄົນສຳຄັນພາຍໃນບ້ານ.
3. ວັດທະນາທຳ ແລະ ອາຫານຂອງທ້ອງຖິ່ນ.
4. ວັນບຸນປະເພນີ ແລະ ວັນສຳຄັນຂອງຊາດ.

ການນຳໃຊ້ປື້ມບົດເຝິກຫັດໜ່ວຍບ້ານຂອງຂ້ອຍເຂົ້າໃນການກຽມຄວາມ ພ້ອມໃນການຮຽນຮູ້ທາງດ້ານວິທະຍາສາດໃຫ້ມີຄຸນນະພາບຄູສອນ ແລະ ຜູ້ປົກຄອງຄວນໃຊ້ພາຍຫຼັງທີ່ເດັກໄດ້ຮຽນຮູ້ສິ່ງທີ່ມີໃນກິດຈະກຳວົງມົນຜ່ານມາແລ້ວ, ພ້ອມກັນນັ້ນ ຄູ ແລະ ຜູ້ປົກຄອງຊ່ວຍແນະນຳໃຫ້ເດັກໄດ້ເຝິກທັກສະການເວົ້າຊື່ທີ່ມີໃນຮູບພາບ ແລະ ການທາສີຮູບຕາມເນື້ອໃນທີ່ມີໃນປື້ມຫົວນີ້ດ້ວຍຕົນເອງໃຫ້ຫຼາຍຂຶ້ນ.

ພ້ອມດຽວກັນນີ້ຄະນະຮັບຜິດຊອບໃນການປັບປຸງ ແລະ ຮຽບຮຽງປື້ມຄູ່ມືຄູສະບັບນີ້ມີຄວາມຍິນດີເປັນຢ່າງຍິ່ງຮັບເອົາທຸກຄຳຄິດເຫັນຂອງບັນດາທ່ານເພື່ອປັບປຸງປື້ມບົດເຝິກຫັດດັ່ງກ່າວໃຫ້ມີຄຸນນະພາບດີຂຶ້ນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ


**ຫົວຂໍ້** **ໜ້າ**

**ກິດຈະກຳການຮຽນ-ການສອນໜ່ວຍ ບ້ານຂອງຂ້ອຍ ສຳລັບຊັ້ນອະນຸບານປີທີ 1**......1

ບ້ານ...... 2

ຊື່ບ້ານ...... 3

ສະຖານທີ່ສຳຄັນພາຍໃນບ້ານ......4

ບຸກຄົນພາຍໃນບ້ານ...... 5

ການປະຕິບັດຕົນຕໍ່ບຸກຄົນພາຍໃນບ້ານ...... 6

ຮັກສາຄວາມສະອາດພາຍໃນບ້ານ......7

ອາຊີບ ແລະ ໜ້າທີ່ບຸກຄົນໃນບ້ານ...... 8

ນາຍຄູ...... 9

ນາຍໝໍ...... 10

ຊາວນາ......11

ຊາວສວນ......12

ແມ່ຄ້າ...... 13

ພໍ່ຄ້າ...... 14

ທະຫານ......15

ຕຳຫຼວດ...... 16

ອາຫານ ແລະ ວັດທະນະທຳ......17

ການນຸ່ງຖື......18

ການນຸ່ງຖື (ຕໍ່)......19

ສິລະປະວັນນະຄະດີທ້ອງຖິ່ນ...... 20

ສິລະປະວັນນະຄະດີທ້ອງຖິ່ນ (ຕໍ່)...... 21

ສິລະປະວັນນະຄະດີທ້ອງຖິ່ນ (ຕໍ່)......22

ຫຼິ້ນພື້ນເມືອງ...... 23

ອາຫານພື້ນເມືອງ...... 24

ການມ້ຽນເຄື່ອງໃຊ້...... 25

ສິລະປະຫັດຖະກຳ...... 26

ສິລະປະຫັດຖະກຳ (ຕໍ່)......................................................................................................27
ສິລະປະຫັດຖະກຳ (ຕໍ່)......................................................................................................28
ສິລະປະຫັດຖະກຳ (ຕໍ່)......................................................................................................29
ສິລະປະຫັດຖະກຳ (ຕໍ່)......................................................................................................30
ວັນສຳຄັນຂອງຊາດ ແລະ ວັນບຸນປະເພນີ.....................................................................31
ວັນຄູ...............................................................................................................................32
ວັນຊາດ...........................................................................................................................33
ວັນແມ່ຍິງສາກົນ..............................................................................................................34
ບຸນປີໃໝ່..........................................................................................................................35
ວັນເດັກ...........................................................................................................................36

# ກິດຈະກຳການຮຽນ-ການສອນ
# ໜ່ວຍ: ບ້ານຂອງຂ້ອຍ

**ສຳລັບຊັ້ນອະນຸບານປີທີ 1**



**ເນື້ອໃນການຮຽນຂອງໜ່ວຍບ້ານຂອງຂ້ອຍປະກອບມີ:**

1. ບ້ານ.
2. ອາຊີບ ແລະ ບຸກຄົນສຳຄັນ.
3. ວັດທະນະທຳ ແລະ ອາຫານ.
4. ວັນບຸນປະເພນີ ແລະ ວັນສຳຄັນຂອງຊາດ.

# ບ້ານ



**ເນື້ອໃນການຮຽນຂອງຫົວຂໍ້ບ້ານປະກອບມີ:**

1. ຊື່ບ້ານ.
2. ສະຖານທີ່ສຳຄັນ.
3. ບຸກຄົນພາຍໃນບ້ານ.
4. ການປະຕິບັດຕົນຕໍ່ບຸກຄົນພາຍໃນບ້ານ.
5. ຮັກສາຄວາມສະອາດພາຍໃນບ້ານ.

# ຊື່ບ້ານ



**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ບ້ານ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ບ້ານຂອງຫຼານຊື່ບ້ານຫຍັງ?
- ສະຫຼຸບ: ບ້ານຂອງຫຼານຊື່... ,ຫຼານທີ່ມີຊື່ບ້ານຄືກັນ ແມ່ນຢູ່ບ້ານດຽວກັນ.
- ທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ສະຖານທີ່ສຳຄັນພາຍໃນບ້ານ









**ຈຸດປະສົງ:** ເພື່ອໃຫ້ເດັກບອກສະຖານທີ່ສຳຄັນ ພາຍໃນບ້ານ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ໃນບ້ານຂອງຫຼານມີສະຖານທີ່ແບບນີ້ບໍ?
- ສະຫຼຸບ: ສະຖານທີ່ສຳຄັນພາຍໃນບ້ານມີ ຫ້ອງການບ້ານ, ວັດ, ໂຮງຮຽນ, ຕະຫຼາດ, ແລະ ສຸກສາລາ.
- ທາສີຮູບຄົນ ແລະ ສະຖານທີ່ຕ່າງໆ ໂດຍນຳໃຊ້ສີຕາມໃຈ.

# ບຸກຄົນພາຍໃນບ້ານ











**ຈຸດປະສົງ:** ເພື່ອໃຫ້ເດັກບອກບຸກຄົນພາຍໃນບ້ານ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນໃຜແດ່ໃນຮູບນີ້? ໃນບ້ານຂອງຫຼານມີບຸກຄົນແບບນີ້ບໍ່?
- ສະຫຼຸບ: ບຸກຄົນພາຍໃນບ້ານມີ ນາຍບ້ານ, ນາຍຄູ, ນາຍໝໍ, ຊາວນາ, ຊາວສວນ, ພໍ່ຄ້າ, ແມ່ຄ້າ, ທະຫານ, ຕຳຫຼວດ ແລະ ພະສົງ.
- ທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນຕໍ່ບຸກຄົນພາຍໃນບ້ານ



**ຈຸດປະສົງ:** ເພື່ອໃຫ້ເດັກບອກ ການປະຕິບັດຕົນຕໍ່ບຸກຄົນພາຍໃນບ້ານ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ເດັກນ້ອຍກໍາລັງເຮັດຫຍັງ? ເວລາຫຼານເວົ້າກັບຄົນໃນບ້ານຄວນເວົ້າແນວໃດ?
- ສະຫຼຸບ: ການປະຕິບັດຕົນຕໍ່ບຸກຄົນພາຍໃນບ້ານຕ້ອງໃຊ້ຄໍາເວົ້າ ແລະ ປະພຶດ ຕົນເໝາະສົມເຊັ່ນ: ສະບາຍດີ ເມື່ອພົບຜູ້ໃຫຍ່, ຂໍໂທດ ເມື່ອເວລາເຮັດຜິດ, ຂອບໃຈ ເມື່ອໃຫ້ໄດ້ຮັບ ສິ່ງຂອງ, ເຈົ້າ, ໂດຍ ເມື່ອເວລາຜູ້ໃຫ່ຍເອີ້ນ.
- ໃຫ້ເດັກທາສີຮູບຄົນ ໂດຍນໍາໃຊ້ສີຕາມໃຈ.

# ຮັກສາຄວາມສະອາດພາຍໃນບ້ານ



**ຈຸດປະສົງ:** ເພື່ອໃຫ້ເດັກບອກການຮັກສາຄວາມສະອາດພາຍໃນບ້ານ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ພວກເຮົາເຫັນຄົນກຳລັງເຮັດຫຍັງຢູ່ຕາມ ຖະໜົນ? ຢາກໃຫ້ບ້ານສະອາດຄວນເຮັດແນວໃດ?
- ສະຫຼຸບ: ຮັກສາຄວາມສະອາດພາຍໃນບ້ານຕ້ອງ ເກັບຂີ້ເຫຍື້ອ, ບໍ່ຖິ້ມຂີ້ເຫຍື້ອຊະຊາຍ.
- ທາສີຮູບຄົນ ແລະ ເຮືອນ ໂດຍນຳໃຊ້ສີຕາມໃຈ.

# ອາຊີບ ແລະ ໜ້າທີ່ບຸກຄົນພາຍໃນບ້ານ



**ເນື້ອໃນການຮຽນຂອງຫົວຂໍ້ ອາຊີບ ແລະ ໜ້າທີ່ບຸກຄົນພາຍໃນບ້ານປະກອບມີ:**

1. ນາຍຄູ.
2. ນາຍໝໍ.
3. ຊາວນາ, ຊາວສວນ.
4. ພໍ່ຄ້າ, ແມ່ຄ້າ.
5. ທະຫານ, ຕຳຫຼວດ.

# ນາຍຄູ




**ຈຸດປະສົງ:** ເພື່ອໃຫ້ເດັກບອກໜ້າທີ່ຂອງຄູ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ຄົນທີ່ຢູ່ກັບເດັກນັ້ນແມ່ນໃຜ? ຄູມີໜ້າທີ່ຫຍັງ?
- ສະຫຼຸບ: ຄູມີໜ້າທີ່ສອນໜັງສື ແລະ ເບິ່ງແຍງເດັກ.
- ທາສີຮູບຄົນ ໂດຍນະໃຊ້ສີຕາມໃຈ.

# ນາຍໝໍ



**ຈຸດປະສົງ:** ເພື່ອໃຫ້ເດັກບອກໜ້າທີ່ຂອງນາຍໝໍ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຄົນທີ່ກຳລັງກວດສຸຂະພາບແມ່ນໃຜ? ນາຍໝໍມີໜ້າທີ່ຫຍັງ?
- ສະຫຼຸບ: ນາຍໝໍມີໜ້າທີ່ ກວດສຸຂະພາບ ແລະ ປິ່ນປົວຄົນເຈັບ.
- ທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ຊາວນາ



**ຈຸດປະສົງ:** ເພື່ອໃຫ້ເດັກ ບອກໜ້າທີ່ຂອງຊາວນາ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຄົນກຳລັງເຮັດຫຍັງ ໃນນຮູບນີ້? ຊາວນາມີໜ້າ ທີ່ຫຍັງ?
- ເດັກຮ່ວມກັນສະຫຼຸບວ່າ: ຊາວນາມີໜ້າທີ່ປູກເຂົ້າ.
- ທາສີຮູບຄົນ ແລະ ທຳມະຊາດ ໂດຍນຳໃຊ້ສີຕາມໃຈ.

# ຊາວສວນ



**ຈຸດປະສົງ:** ເພື່ອໃຫ້ເດັກສາມາດ ບອກໜ້າທີ່ຂອງຊາວສວນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຊາວສວນມີໜ້າທີ່ຫຍັງ?
- ສະຫຼຸບ: ຊາວສວນມີໜ້າທີ່ປູກຜັກ.
- ທາສີຮູບຄົນ ແລະ ຕົ້ນໄມ້ ໂດຍນຳໃຊ້ສີຕາມໃຈ.

# ແມ່ຄ້າ



**ຈຸດປະສົງ:** ເພື່ອໃຫ້ເດັກບອກໜ້າທີ່ຂອງແມ່ຄ້າ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຄົນໃນຮູບນີ້ກຳລັງເຮັດຫຍັງ? ຜູ້ຍິງທີ່ຂາຍເຄື່ອງເອີ້ນວ່າແນວໃດ?
- ສະຫຼຸບ: ແມ່ຄ້າມີໜ້າທີ່ ເປັນຜູ້ຂາຍເຄື່ອງ.
- ທາສີຮູບຄົນ ແລະ ໝາກໄມ້ ໂດຍນຳໃຊ້ສີຕາມໃຈ.

# ພໍ່ຄ້າ



**ຈຸດປະສົງ:** ເພື່ອໃຫ້ເດັກ ບອກໜ້າທີ່ຂອງພໍ່ຄ້າ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຄົນໃນຮູບນີ້ກຳລັງເຮັດຫຍັງ? ຜູ້ຊາຍທີ່ຂາຍເຄື່ອງເອີ້ນວ່າແນວໃດ?
- ສະຫຼຸບ: ພໍ່ຄ້າມີໜ້າທີ່ ເປັນຜູ້ຂາຍເຄື່ອງ.
- ທາສີຮູບຄົນ ແລະ ໝາກໄມ້ ໂດຍນຳໃຊ້ສີຕາມໃຈ.

# ທະຫານ



**ຈຸດປະສົງ:** ເພື່ອໃຫ້ເດັກບອກໜ້າທີ່ຂອງທະຫານ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ທະຫານມີໜ້າທີ່ຫຍັງ?
- ສະຫຼຸບ: ທະຫານມີໜ້າທີ່ປ້ອງກັນປະເທດຊາດ.
- ທາສີຮູບຄົນ ແລະ ຕົ້ນໄມ້ ໂດຍນຳໃຊ້ສີຕາມໃຈ.

# ຕຳຫຼວດ



**ຈຸດປະສົງ:** ເພື່ອໃຫ້ເດັກບອກໜ້າທີ່ຂອງຕຳຫຼວດ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຕຳຫຼວດກຳລັງເຮັດຫຍັງໃນຮູບນີ້? ຕຳຫຼວດມີໜ້າທີ່ຫຍັງ?
- ສະຫຼຸບ: ຕຳຫຼວດມີໜ້າທີ່ຮັກສາຄວາມສະຫງົບຂອງບ້ານເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍ ເຊັ່ນ: ອຳນວຍຄວາມສະດວກໃນການເດີນທາງ ແລະ ຈັບຄົນບໍ່ດີ.
- ທາສີຮູບຄົນ ແລະ ຕົ້ນໄມ້ ໂດຍນຳໃຊ້ສີຕາມໃຈ.

# ອາຫານ ແລະ ວັດທະນະທຳ



**ເນື້ອໃນການຮຽນຂອງຫົວຂໍ້ອາຫານ ແລະ ວັດທະນະທຳປະກອບມີ:**

1. ການນຸ່ງຖື.
2. ສິລະປະວັນນະຄະດີທ້ອງຖິ່ນ.
3. ຫຼິ້ນພື້ນເມືອງ.
4. ອາຫານພື້ນເມືອງ.
5. ສິລະປະຫັດຖະກຳ.

# ການນຸ່ງຖື






**ຈຸດປະສົງ:** ເພື່ອໃຫ້ເດັກບອກການນຸ່ງຖືຕາມທ້ອງຖິ່ນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເຄື່ອງນຸ່ງໃນຮູບນີ້ ແມ່ຍິງນຸ່ງອັນໃດ? ຜູ້ຊາຍນຸ່ງອັນໃດ? ໃນບ້ານຫຼານມີຄົນນຸ່ງແບບນີ້ບໍ່?
- ສະຫຼຸບ: ການນຸ່ງຖືໂດຍທົ່ວໄປ ຜູ້ຍິງນຸ່ງສິ້ນ ແລະ ເສື້ອ, ສ່ວນຜູ້ຊາຍນຸ່ງໂສ້ງ ແລະ ເສື້ອ.
- ທາສີຮູບເສື້ອ, ໂສ້ງ ແລະ ສິ້ນ ໂດຍນຳໃຊ້ສີຕາມໃຈ.

# ການນຸ່ງຖື (ຕໍ່)





**ຈຸດປະສົງ:** ເພື່ອໃຫ້ເດັກບອກການນຸ່ງຖືຕາມທ້ອງຖິ່ນ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຜູ້ຊາຍໃນຮູບນີ້ນຸ່ງຫຍັງ? ການນຸ່ງແບບນີ້ໃນ ບ້ານຫຼານມີບໍ?
- ສະຫຼຸບ: ການນຸ່ງຖືຕາມທ້ອງຖິ່ນ ຜູ້ຊາຍນອກຈາກນຸ່ງໂສ້ງ ແລ້ວຍັງນຸ່ງຜ້າສະໂຫຼ້ງ, ແລະ ຜ້າຂາວມ້າມັດແອວ.
- ທາສີຮູບຄົນ ໂດຍນໍາໃຊ້ສີຕາມໃຈ.

# ສິລະປະວັນນະຄະດີທ້ອງຖິ່ນ



**ຈຸດປະສົງ:** ເພື່ອໃຫ້ເດັກບອກສິລະປະວັນນະຄະດີທ້ອງຖິ່ນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານເຄີຍລຳ ແລະ ຮ້ອງເພງບໍ?
- ສະຫຼຸບ: ການຂັບ, ລຳ ແລະ ເພງແມ່ນສິລະປະວັນນະຄະດີທ້ອງຖິ່ນ.
- ທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ສິລະປະວັນນະຄະດີທ້ອງຖິ່ນ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກສິລະປະວັນນະຄະດີທ້ອງຖິ່ນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານເຄີຍຟ້ອນບໍ?
- ສະຫຼຸບ: ການຟ້ອນກໍແມ່ນສິລະປະວັນນະຄະດີທ້ອງຖິ່ນ.
- ທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ສິລະປະວັນນະຄະດີທ້ອງຖິ່ນ (ຕໍ່)











**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ເຄື່ອງດົນຕີພື້ນເມືອງ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຢູ່ເຮືອນຫຼານມີເຄື່ອງດົນຕີແບບນີ້ບໍ?
- ສະຫຼຸບ: ແຄນ, ກອງ, ລະນາດ, ຊໍ, ຊຶ່ງແມ່ນເຄື່ອງດົນຕີພື້ນເມືອງຂອງລາວເຮົາ.
- ທາສີຮູບເຄື່ອງດົນຕີ.

# ຫຼິ້ນພື້ນເມືອງ





**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ການຫຼິ້ນພື້ນເມືອງ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຄົນໃນຮູບນີ້ກຳລັງເຮັດຫຍັງ? ຫຼານ ເຄີຍຫຼິ້ນແບບນີ້ບໍ?
- ສະຫຼຸບ: ການຫຼິ້ນແບບຫຼິ້ນພື້ນເມືອງມີ ເຕັ້ນໄຮ່ນາ, ລູ່ລີ່ເອົ້າສານ ແລະ ຫຼິ້ນໝາກຄອນ.
- ທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ອາຫານພື້ນເມືອງ







**ຈຸດປະສົງ:** ເພື່ອໃຫ້ເດັກບອກຊື່ອາຫານພື້ນເມືອງ.

**ກິດຈະກໍາ:**

- ສັງເກດເບິ່ງຮູບ ແລະ ຕອບຄໍາຖາມດັ່ງນີ້: ຫຼານເຫັນອາຫານຫຍັງໃນຮູບນີ້? ຫຼານເຄີຍກິນອາຫານຫຍັງແດ່?
- ສະຫຼຸບ: ຊື່ອາຫານທີ່ມີໃນທ້ອງຖິ່ນມີ ເຂົ້າໜຽວ, ປີ້ງປາ, ລວກຜັກ, ຕໍາໝາກຮຸ່ງ ແລະ ແກງ.
- ທາສີຮູບອາຫານ ໂດຍນໍາໃຊ້ສີຕາມໃຈ.

# ສິລະປະຫັດຖະກຳ







**ຈຸດປະສົງ:** ເພື່ອໃຫ້ເດັກບອກສິລະປະຫັດຖະກຳທ້ອງຖິ່ນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຄົນໃນຮູບນີ້ນຸ່ງເຄື່ອງ ຫຍັງແດ່? ຫຼານເຄີຍເຫັນໃຜນຸ່ງເຄື່ອງໃສ່ຜ້າແພບ່ຽງແບບນີ້ບໍ?
- ສະຫຼຸບ: ສິລະປະຫັດຖະກຳທ້ອງຖິ່ນມີ ຜ້າແພ ແລະ ຜ້າແພບ່ຽງ.
- ທາສີຮູບຄົນ ແລະ ຜ້າແພ ໂດຍນຳໃຊ້ສີຕາມໃຈ.

# ສິລະປະຫັດຖະກຳ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກສິລະປະຫັດຖະກຳທ້ອງຖິ່ນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ພວກຫຼານເຫັນຫຍັງໃນຮູບນີ້? ພວກຫຼານເຄີຍເຫັນໃຜນຸ່ງເຄື່ອງແບບນີ້ບໍ?
- ສະຫຼຸບ: ສິລະປະຫັດຖະກຳທ້ອງຖິ່ນມີ ຜ້າສິ້ນ.
- ທາສີຮູບສິ້ນ ໂດຍນຳໃຊ້ສີຕາມໃຈ.

# ສິລະປະຫັດຖະກຳ (ຕໍ່)





**ຈຸດປະສົງ:** ເພື່ອໃຫ້ເດັກບອກສິລະປະຫັດຖະກຳທ້ອງຖິ່ນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງແດ່ໃນຮູບນີ້? ຫຼານເຄີຍ ເຫັນເຄື່ອງໃຊ້ແນວນີ້ບໍ?
- ສະຫຼຸບ: ສິລະປະຫັດຖະກຳທ້ອງຖິ່ນມີ ໂອ ແລະ ຂັນ.
- ທາສີຮູບໂອ ແລະ ຂັນ ໂດຍນຳໃຊ້ສີຕາມໃຈ.

# ສິລະປະຫັດຖະກຳ (ຕໍ່)





**ຈຸດປະສົງ:** ເພື່ອໃຫ້ເດັກບອກສິລະປະຫັດຖະກຳທ້ອງຖິ່ນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງແດ່ໃນຮູບນີ້? ຫຼານເຄີຍເຫັນເຄື່ອງໃຊ້ແນວນີ້ບໍ?
- ສະຫຼຸບ: ສິລະປະຫັດຖະກຳທ້ອງຖິ່ນມີກະບຸງ ແລະ ກະຕ່າ.
- ທາສີຮູບກະບຸງ ແລະ ກະຕ່າ ໂດຍນຳໃຊ້ສີຕາມໃຈ.

# ສິລະປະຫັດຖະກຳ (ຕໍ່)



**ຈຸດປະສົງ:** ເພື່ອໃຫ້ເດັກບອກສິລະປະຫັດຖະກຳທ້ອງຖິ່ນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານເຄີຍເຫັນເຄື່ອງໃຊ້ແນວນີ້ບໍ?
- ສະຫຼຸບ: ສິລະປະຫັດຖະກຳທ້ອງຖິ່ນມີຕິບເຂົ້າ.
- ທາສີຮູບຕິບເຂົ້າ ໂດຍນຳໃຊ້ສີຕາມໃຈ.

# ສິລະປະຫັດຖະກຳ (ຕໍ່)





**ຈຸດປະສົງ:** ເພື່ອໃຫ້ເດັກບອກສິລະປະຫັດຖະກຳທ້ອງຖິ່ນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງແດ່ໃນຮູບນີ້? ຫຼານເຄີຍເຫັນເຄື່ອງໃຊ້ແນວນີ້ບໍ?
- ສະຫຼຸບ: ສິລະປະຫັດຖະກຳທ້ອງຖິ່ນມີຫວດ ແລະ ມວຍໜຶ້ງເຂົ້າ.
- ທາສີຮູບຫວດ ແລະ ມວຍໜຶ້ງເຂົ້າ ໂດຍນຳໃຊ້ສີຕາມໃຈ.

# ວັນສຳຄັນຂອງຊາດ ແລະ ວັນບຸນປະເພນີ






**ເນື້ອໃນການຮຽນຂອງຫົວຂໍ້ວັນບຸນປະເພນີ ແລະ ວັນສຳຄັນຂອງຊາດ ປະກອບມີ:**

1. ວັນຄູ.
2. ວັນຊາດ.
3. ວັນແມ່ຍິງສາກົນ.
4. ບຸນປີໃໝ່.
5. ວັນເດັກ.

# ວັນຄູ




**ຈຸດປະສົງ:** ເພື່ອໃຫ້ເດັກບອກວັນຄູ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍມອບຫຍັງໃຫ້ຄູໃນຮູບນີ້?
  ນີ້ແມ່ນວັນບຸນຫຍັງ? ຫຼານເຄີຍມອບຂອງຂວັນໃຫ້ຄູບໍ? ວັນຄູກົງກັບວັນເດືອນ, ປີ, ໃດ?
- ສະຫຼຸບ: ວັນຄູກົງກັບວັນທີ 7 ເດືອນ ຕຸລາ ມີການອວຍພອນຄູ ແລະ ມອບຊໍ່ດອກໄມ້ໃຫ້ຄູ.
- ທາສີຮູບຄືນ ໂດຍນຳໃຊ້ສີຕາມໃຈ.

# ວັນຊາດ




**ຈຸດປະສົງ:** ເພື່ອໃຫ້ເດັກບອກວັນຊາດ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງໃນຮູບນີ້? ຫຼານເຄີຍເຫັນທຸງຊາດລາວບໍ່? ນີ້ ແມ່ນວັນບຸນຫຍັງ? ວັນຊາດກົງກັບວັນເດືອນ, ປີ, ໃດ?
- ສະຫຼຸບ: ວັນຊາດກົງກັບວັນທີ 2 ເດືອນທັນວາ, ມີການປະດັບປະດາດ້ວຍທຸງຊາດ, ທຸງທິວ.
- ທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ວັນແມ່ຍິງສາກົນ




**ຈຸດປະສົງ:** ເພື່ອໃຫ້ເດັກບອກວັນແມ່ຍິງສາກົນ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍກຳລັງເຮັດຫຍັງໃນຮູບນີ້? ນີ້ແມ່ນວັນບຸນຫຍັງ? ຫຼານຮັກແມ່ຕ້ອງປະຕິບັດຕົນແນວໃດ?
- ສະຫຼຸບ: ວັນແມ່ຍິງ ກົງກັບວັນທີ 8 ເດືອນ ມີນາ ມີການສະເຫຼີມສະຫຼອງ ແລະ ອວຍພອນ, ຮູ້ບຸນຄຸນແມ່ ແລະ ປະຕິບັດຕົນທີ່ດີຕໍ່ພໍ່ແມ່.
- ທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ບຸນປີໃໝ່



**ຈຸດປະສົງ:** ເພື່ອໃຫ້ເດັກບອກວັນບຸນປະເພນີ

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງແດ່ໃນຮູບນີ້? ຫຼານເຄີຍ ໄດ້ໄປສົງນ້ຳພະບໍ? ນີ້ ແມ່ນບຸນຫຍັງ?
- ສະຫຼຸບ: ບຸນປີໃໝ່ແມ່ນໃສ່ບາດ, ສູ່ຂວັນ, ສົງນ້ຳພະ, ຫົດນ້ຳ, ອວຍພອນ ແລະ ມ່ວນຊື່ນໃນວັນບຸນ.
- ທາສີຮູບຄົນ ໂດຍນຳໃຊ້ສີຕາມໃຈ.

# ວັນເດັກ



**ຈຸດປະສົງ:** ເພື່ອໃຫ້ເດັກບອກວັນເດັກ.

**ກິດຈະກຳ:**

- ສັງເກດເບິ່ງຮູບ ແລະ ຕອບຄຳຖາມດັ່ງນີ້: ເດັກນ້ອຍໃນຮູບນີ້ກຳລັງເຮັດຫຍັງ? ນີ້ແມ່ນວັນບຸນຫຍັງ? ວັນເດັກກົງກັບວັນເດືອນ, ປີ, ໃດ?
- ສະຫຼຸບ: ວັນເດັກກົງກັບວັນທີ 1 ມິຖຸນາ, ມີການສະແດງສິລະປະວັນນະຄະດີ, ແຂ່ງຂັນ ກິລາ ແລະ ຢາຍຂອງຂວັນໃຫ້ເດັກ.
- ທາສີຮູບເດັກນ້ອຍ ໂດຍນຳໃຊ້ສີຕາມໃຈ.